## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 27 ຕຸລາ 2024 (10-27-2024)

---

## ອີຊາກແລະເຣເບກາ: ການຮັກຫຼັງຊັງບ່ຽງໃນຄອບຄົວ

**ຈຸດສໍາຄັນໃນບົດຮຽນ:** ຄວາມຮັກສົມຄວນປາສຈາກການຮັກຫຼັງຊັງບ່ຽງພາຍໃນຄອບຄົວ.

**ພຣະຄັມພີຕອບສນອງຊີວິດ:**

ແຈຣີ (Jerry) ຊາຍອາຍຸ 28 ປີ ທີ່ເປັນແຟນທີ່ສັດຊື່ແທ້ໆຂອງທີມຟຸດບອລ ໄມອາມີ ດໍລ໌ຟີນ (Miami Dolphin). ລາວເປັນແບບນັ້ນຕັ້ງແຕ່ອາຍຸ 5 ປີ. ບໍ່ແມ່ນຍ້ອນວ່າເມືອງ ໄມອາມີ ແມ່ນບ້ານເກີດເມືອງນອນຂອງລາວ, ແຕ່ເພາະວ່າເມື່ອລາວອາຍຸ 5 ປີ, ລາວມັກໂຕປາດໍລ໌ຟີນ ແລະເມື່ອລາວເຫັນໝວກ (ເຄື່ອງໝາຍຂອງທີມ ດໍລ໌ຟີນ), ລາວພ້ອມເຂົ້າຢູ່ຕລອດຊີວິດ. ລາວບໍ່ກ້າເປັນແຟນຂອງທີມແຈັດ (Jets) ເລີຍ! ລາວບໍ່ມັກທີມ"ແຈັດ"ເລີຍ. <u>ນີ້ເປັນພຽງວິທີການຂອງຄວາມມັກຄວາມຊັງຂອງພວກເຮົາ</u>. ການໂປດປານເຮັດໃຫ້ພວກເຮົາເປັນມະນຸດ. ພວກເຮົາເຮັດທາງເລືອກຖານສອງເມື່ອພວກເຮົາມີອາຍຸຫຼາຍຂຶ້ນ. ພວກເຮົາອາດຈະເລີ່ມຕົ້ນດ້ວຍຄວາມເປັນກາງ, ແຕ່ພວກເຮົາບໍ່ເຄີຍຢູ່ແບບນັ້ນສເມີມາ. ຊອຄໂກແລັທ(Chocolate) ຫຼື ວານິລາ(Vanilla), ຟອດ(Ford) ຫຼື ເຊີວະໂຣເລ(Chevrolet), ແມຄ(Mac) ຫຼື ພີຊີ(PC), ໂສ້ງຂາສັ້ນ ຫຼື ຂາເຂີນ-ການມັກສິ່ງໃດສິ່ງນຶ່ງແມ່ນການກໍານົດວ່າເຮົາແມ່ນໃຜ. **<u>ແຕ່ພາຍໃນຄອບຄົວການຮັກຫຼັງຊັງບ່ຽງມັນທໍາລາຍ</u>.** ຄວາມລໍາອຽງ(ເຂົ້າຂ້າງອອກຂາ)ແຊກຊຶມຢູ່ໃນເຣື່ອງລາວຂອງຢາໂຄບແລະເອຊາວ. ສະຖານະການໄດ້ຖືກກໍານົດໄວ້ຕັ້ງແຕ່ເລີ່ມຕົ້ນ. ແມ່ແລະພໍ່ ອີຊາກແລະເຣເບກາຕ່າງຄົນກໍ່ເລືອກເອົາລູກໆຂອງຕົນເອງ. ອີຊາກເລືອກເອົາເອຊາວ, ເຣເບກາເລືອກເອົາຢາໂຄບ. ພໍ່ແມ່ແຕ່ລະຄົນຕ່າງກໍ່ເອົາອົກເອົາໃຈ, ວາງແຜນ, ສົມຮູ້ຮ່ວມຄິດ, ແລະຫຼອກລວງເພື່ອໃຫ້ລູກຊາຍຄົນໂປດຂອງຕົນໄດ້ປຽບ. ຄອບຄົວຂອງທ່ານອາດເປັນຄືກັນກັບຄອບຄົວຂອງອີຊາກແລະເຣເບກາ. ມັນອາດຈະບໍ່ໄດ້ປູກຝັງການປະຕິບັດໃນ ທາງບວກ, ແຕ່ຄອບຄົວສອນພວກເຮົາບາງບົດຮຽນທີ່ຍິ່ງໃຫຍ່ທີ່ສຸດຂອງພວກເຮົາ ແລະເປີດເຜີຍບາງຂໍ້ບົກພ່ອງທີ່ຍິ່ງໃຫຍ່ທີ່ສຸດ. **<u>ມັນແມ່ນຜ່ານທາງຄອບຄົວຂອງພວກເຮົາທີ່ພວກເຮົາສົມຄວນທີ່ຈະຮຽນຮູ້ວິທີການຮັກເຊິ່ງກັນແລະກັນ</u>.**

*ມີດ້ານໃດແດ່ໃນຊີວິດທີ່ທ່ານມັກເລືອກປະຕິບັດໂດຍແນ່ນອນ?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

### 1. <u>ປະຖົມມະການ 25:24-28</u>

*24. ຄັນຢູ່ຕໍ່ມາບາງກໍອອກລູກຝາແຝດສອງຄົນລູກຊາຍ. 25. ຜູ້ອອກກ່ອນແດງ ແລະມີຂົນເຕັມຕົວຄືເສື້ອທີ່ເຮັດດ້ວຍຂົນສັດ ດ້ວຍເຫດນີ້ເພິ່ນຈຶ່ງເອີ້ນລາວວ່າ ເອຊາວ. 26. ເມື່ອນ້ອງລາວເກີດມາມືກໍຈັບສົ້ນບ່ອງຂອງເອຊາວໄວ້ ສະນັ້ນເພິ່ນຈຶ່ງເອີ້ນລາວວ່າຢາໂຄບ ເມື່ອລູກຊາຍຝາແຝດທັງສອງເກີດ ອີຊາກ ອາຍຸໄດ້ຫົກສິບປີແລ້ວ. 27. ເມື່ອເດັກນ້ອຍທັງສອງໃຫຍ່ເຕີບໂຕຂຶ້ນມາ ເອຊາວໄດ້ກາຍເປັນນາຍພານທີ່ເກັ່ງກ້າ ແລະຊໍານານລາວເປັນຄົນທີ່ບໍ່ມັກຢູ່ເຮືອນ.* ***28.*** *ສ່ວນຢາໂຄບເປັນຄົນສຸຂຸມແລະມັກຢູ່ແຕ່ໃນເຮືອນ ອີຊາກຮັກ ເອຊາວເພາະວ່າໄດ້ກິນຊີ້ນທີ່ລາວຫາມາໄດ້ສ່ວນນາງເຣເບກາຮັກຢາໂຄບ.*

ໃນເມື່ອພວກເຮົາສັງເກດເຫັນຄວາມແຕກຕ່າງໃນບັນດາລູກຂອງພວກເຮົາ, ມັນເປັນທັມມະຊາດຂອງມະນຸດທີ່ຈະສັງເກດເຫັນ, ເວົ້າກ່ຽວກັບ, ແລະສໍາລັບ "ເດັກນ້ອຍທີ່ແຕກຕ່າງ" ທີ່ຮູ້ສຶກວ່າຖືກປະຖິ້ມໄວ້. ນັ້ນເປັນສິ່ງທີ່ພວກເຮົາສົນທະນາໃນຂນະທີ່ພວກເຮົາຮຽນຮູ້ທີ່ຈະຍອມຮັບເອົາແລະຊື່ນຊົມຄວາມແຕກຕ່າງທີ່ອາດເກີດຂຶ້ນລະຫວ່າງພີ່ນ້ອງ. ຂຶ້ນຢູ່ກັບອາຣົມຂອງພໍ່ແມ່, ປະສົບການຊີວິດ, ຫຼືແມ້

ກະທັ້ງຈຸດຕາບອດ(blind spots), ຄົນເຮົາມີແນວໂນ້ມທີ່ຈະຊົດເຊີຍ ໂດຍການສະແດງຄວາມເມດຕາພິເສດຕໍ່ຜູ້ທີ່ເຂົາເຈົ້າກຳນົດທີ່ສຸດ ຫຼືບັນດາພວກທີ່ເຂົາເຈົ້າມີຄວາມເຫັນອົກເຫັນໃຈຫຼາຍທີ່ສຸດ. ເວລາລ່ວງຜ່ານໄປ, <u>ການເຂົ້າຂ້າງອອກຂາ</u>ນັ້ນສາມາດຂະຫຍາຍໄປສູ່ຄວາມຜິດປົກກະຕິ ໂດຍຜ່ານການກະທຳ ແລະປະຕິກິຣິຍາຕ່າງໆ, ເຮັດໃຫ້ຄວາມຮູ້ສຶກກາຍເປັນຄວາມຈິງທີ່ຮັບຮູ້. ດ້ວຍທັສນະທີ່ຫຼອກລວງ, ພໍ່ແມ່ອາດຈະຊົດເຊີຍສິ່ງທີ່ພວກເຂົາເຈົ້າຮູ້ສຶກວ່າຄູ່ສົມຣົດ(ຜົວຫຼືເມັຽ)ຂອງເຂົາເຈົ້າອາດຈະບໍ່ເຂົ້າໃຈກ່ຽວກັບລູກທີ່ພວກເຂົາເຈົ້າໂປດປານ ("favorite child"). ການໃຫ້ຄ່າຊົດເຊີຍແກ່ລູກຊໍ້າແລ້ວຊໍ້າອີກສາມາດສ້າງຄວາມຄິດທີ່ຜິດ ໂດຍພໍ່ແມ່ທີ່ເປັນຜູ້ເຮັດໃຫ້ໄດ້, ແລະເມື່ອເດັກນ້ອຍມີອາຍຸຫຼາຍຂຶ້ນ, ຜົນສະທ້ອນແລະຄວາມຜິດປົກກະຕິຈະເພີ່ມຂຶ້ນ. ພໍ່ແມ່ເລີ່ມໃຈຮ້າຍຕໍ່ກັນແລະກັນ ແລະມີພຶຕິກັມຮຸນແຮງຂຶ້ນເພື່ອປົກປ້ອງລູກທີ່ຕົນໂປດປານ. ພໍ່ແມ່ທີ່ມີຄວາມສາມາດ, ບຳລຸງລ້ຽງຄວາມຕ້ອງການຂອງລູກຫຼານ. ລູກຄົນໂປດມັກຈະດຳເນີນຊີວິດໄປຢ່າງມີສະຕິທີ່ບໍ່ສົມເຫດສົມຜົນແຫ່ງການຮັບມູນມໍຣະດົກ. ເມື່ອລູກຄົນໂປດໃຫຍ່ຂຶ້ນ, ສະຖານະການແລະຜົນຮັບທີ່ຕາມມາກໍ່ເພີ່ມເຕີມຫຼາຍຂຶ້ນ ແລະໃນທີ່ສຸດກໍ່ໄປເຖິງຈຸດທີ່ບໍ່ສາມາດກັບຄືນໄດ້. <u>ການທີ່ລູກໆຂອງພວກເຮົາແຕກຕ່າງກັນກໍ່ຖືວ່າເປັນເຣື່ອງປົກກະຕິ</u>, <u>ແຕ່ການທີ່ພໍ່ແມ່ສະແດງຄວາມລຳອຽງເຂົ້າຂ້າງອອກຂານັ້ນເປັນການບໍ່ຖືກຕ້ອງ</u>. ແບບແຜນຂອງພໍ່ແມ່ແບບນັ້ນຈະສ້າງຄວາມຂັດແຍ້ງລະຫວ່າງຜົວແລະເມັຽທີ່ຈະລາມໄປສູ່ຊີວິດຂອງບັນດາພວກລູກຢ່າງຫຼີກລ້ຽງບໍ່ໄດ້ ແລະຈະເຮັດໃຫ້ຄົນລຸ້ນຕໍ່ໄປສ່ຽງຕໍ່ການຂັດແຍ້ງຕລອດຊີວິດ. ຢາໂຄບແລະເອຊາວເປັນລູກຝາແຝດແຕ່ພວກເຂົາເຈົ້າແຕກຕ່າງກັນ. ອີຊາກແລະເຣເບກາ ໄດ້ສະແດງຄວາມລຳອຽງເຂົ້າຂ້າງອອກຂາກັບລູກຊາຍຄົນໂປດຂອງພວກເພິ່ນ. ພຣະຄັມພີ ປະຖົມມະການ ບົດທີ່ 27 ຊີ້ໃຫ້ເຫັນເຖິງຄວາມຜິດປົກກະຕິຂອງພວກເພິ່ນດັ່ງນີ້: "ເມື່ອອີຊາກເວົ້າກັບເອຊາວ ນາງເຣເບກາກໍໄດ້ຍິນເລື່ອງນັ້ນແລ້ວ. ພໍເອຊາວອອກຈາກເມືອງໄປລ່າສັດມາໃຫ້ພໍ່."(ຂໍ້ 5). ແລ້ວນາງໄດ້ໄປຫາ "ລູກຊາຍຂອງນາງ" ແລະໄດ້ບອກລາວກ່ຽວກັບວິທີລັກເອົາພຣະພອນ (ຂໍ້ 5-10). ອີຊາກມີຄວາມຄ້າຍຄືກັນກັບ "ລູກຊາຍຂອງລາວ" ເອຊາວ. ອີຊາກຮັກເອຊາວເພາະລາວມັກລົດຊາດອາຫານສັດປ່າ. ການມີລູກຄົນໃດຄົນນຶ່ງທີ່ຄືກັນຫຼາຍກວ່າຄົນອື່ນບໍ່ເສັຽຫາຍຫຍັງແລະເປັນເຣື່ອງທັມມະດາ. ແຕ່ການເລືອກປະຕິບັດກໍ່ເໝືອນກັນກັບການເລືອກທີ່ຈະລົງໂທດດ້ວຍການປ່ອຍປະລະເລີຍຄົນອື່ນ. ພວກເຮົາບໍ່ສາມາດພິສູດໄດ້ວ່າເປັນຫຍັງເຣເບກາຈຶ່ງມັກຢາໂຄບ, ແຕ່ປະສົບການຊີ້ບອກວ່ານາງອາດມັກລາວຍ້ອນຜົວຂອງນາງມັກເອຊາວ. ພວກເຮົາບໍ່ຮູ້ແນ່ນອນ. ແຕ່ແນ່ນອນວ່າພວກເຂົາເຈົ້າຕ່າງກໍ່ມີຄົນໂປດປານຂອງຕົວເອງ. **ແລະຄອບຄົວຂອງພວກເຂົາເຈົ້າກໍ່ພັງທະລາຍລົງ ເພາະຄວາມຮັກຫຼັງຊັງບ່ຽງຂອງພວກເພິ່ນ.**

*ທ່ານເຫັນການຄອບຄອງທີ່ເຮັດໃຫ້ເກີດຄວາມຂັດແຍ້ງຢູ່ໃສໃນໂລກປະຈຸບັນນີ້?*

## 2. <u>ປະຖົມມະການ 27:5-10</u>

*5. ເມື່ອອີຊາກເວົ້າກັບເອຊາວ ນາງເຣເບກາກໍໄດ້ຍິນເຣື່ອງນັ້ນ ຄັນແລ້ວພໍ ເອຊາວ ອອກຈາກເມືອງໄປລ່າສັດມາໃຫ້ພໍ່. 6. ນາງເຣ-ເບກາຈຶ່ງເວົ້າກັບຢາໂຄບວ່າ, "ແມ່ໄດ້ຍິນພໍ່ເຈົ້າເວົ້າກັບເອຊາວອ້າຍຂອງເຈົ້າວ່າ. 7. ເຈົ້າຈົ່ງໄປລ່າສັດ ແລ້ວເຮັດອາຫານແຊບໆໃຫ້ພໍ່ເມື່ອພໍ່ກິນອີ່ມແລ້ວພໍ່ຈະອວຍພອນໃຫ້ເຈົ້າ ຕໍ່ໜ້າພຣະຜູ້ເປັນເຈົ້າກ່ອນພໍ່ຈະຕາຍ. 8. ບັດນີ້ລູກເອີຍຈົ່ງຟັງແລະເຮັດໃນສິ່ງທີ່ແມ່ບອກ. 9. ຈົ່ງໄປທີ່ຝູງແບ້ແລະເອົາລູກແບ້ໂຕຕຸ້ຍພີ ສອງໂຕມາໃຫ້ແມ່ເພື່ອແມ່ຈະເຮັດອາຫານຢ່າງແຊບໆທີ່ພໍ່ເຈົ້າມັກ. 10. ແລ້ວເຈົ້າຈົ່ງເອົາອາຫານນັ້ນໄປໃຫ້ພໍ່ເຈົ້າກິນ ແລະເພິ່ນຈະອວຍພອຍໃຫ້ເຈົ້າກ່ອນເພິ່ນຈະຕາຍ."*

ໃນເມື່ອສິ່ງທີ່ມັກເຮັດບໍ່ໄດ້ດັ່ງໃຈ, ພໍ່ແມ່ທີ່ສນັບສນຸນລູກກໍ່ມັກຈະຫາຂໍ້ແກ້ຕົວໃຫ້ລູກ. ຂໍ້ແກ້ຕົວເຫຼົ່ານັ້ນກໍ່ກາຍເປັນການຕົວະ. ການຕົວະກາຍເປັນການທໍລະຍົດ. ການທໍລະຍົດຈະເລີນເຕີບໂຕເປັນການຊັງ. ແລະຄວາມກຽດຊັງເຮັດໃຫ້ເກີດຄວາມຕາຍ. ດ້ວຍຄວາມເຖົ້າແກ່ຂອງອີຊາກແລະການເບິ່ງເຫັນໜ້ອຍລົງ, ລາວຈຶ່ງຂໍໃຫ້ລູກຊາຍຂອງລາວ, ເອຊາວ, ລ່າສັດປ່າ ໃຫ້ໄດ້ມາເປັນອາຫານແຊບໆທີ່ລາວມັກກິນ. ແລ້ວອີຊາກກໍ່ສັນຍາວ່າລາວຈະໃຫ້ພອນແກ່ເອຊາວ. *"ພອນດັ່ງກ່າວໄດ້ຮັບຈາກບັນພະບຸຣຸດຂອງຕະກູນໃຫ້ແກ່ຜູ້ສືບທອດ. ແລະມີຄວາມໝາຍອັນໃຫຍ່ຫຼວງ ເນື່ອງຈາກວ່າມັນເປັນການມອບສິດທິໃນການປົກຄອງຂອງຕະກູນຢ່າງເປັນທາງການຫຼັງຈາກທີ່ບັນ*

*ພະບຸຣຸດໄດ້ເສັຽຊີວິດໄປແລ້ວ".* ເຣເບກາໄດ້ຟັງຢູ່ແລະວາງແຜນຫຼອກລວງສາມີຂອງນາງໃຫ້ພອນຂອງຕົນແກ່ຢາໂຄບ. ດ້ວຍຄວາມສລາດຫຼັກແຫຼມນາງໄດ້ວາງແຜນການທີ່ບໍ່ຄາດຄິດວ່າແມ່ຄົນໃດຄົນນຶ່ງຈະເຮັດ. **<u>ນາງໄດ້ທໍຣະຍົດຕໍ່ຜົວແລະລູກຊາຍກົກຂອງນາງ.</u>** ພອນຂອງອີຊາກບໍ່ແມ່ນຂອງນາງທີ່ຈະລັກເອົາຈາກລູກຊາຍຄົນນຶ່ງ ແລ້ວມອບໃຫ້ແກ່ລູກຊາຍອີກຄົນນຶ່ງ. ຈົນເຖິງຈຸດນຶ່ງ, ບາບທັງໝົດນີ້ເປັນຂອງເຣເບກາ. ມັນແມ່ນຄວາມຄິດຂອງນາງທີ່ຈະດັກຟັງຄຳເວົ້າຂອງສາມີຂອງນາງຕໍ່ລູກຊາຍຂອງພວກເຂົາເຈົ້າ. ມັນເປັນຄວາມຄິດຂອງນາງທີ່ຈະເຮັດໃຫ້ຢາໂຄບຟ້າວເອົາແບ້ໜຸ່ມສອງໂຕເພື່ອໃຫ້ນາງສາມາດຈັດຕຽມອາຫານທີ່ໂປດປານໃຫ້ແກ່ອີຊາກ. ມັນເປັນຄວາມຄິດຂອງນາງສຳລັບຢາໂຄບທີ່ຈະປອມຕົວເປັນເອຊາວ ແລະຕົວະພໍ່ຂອງລາວກ່ຽວກັບຕົວຕົນຂອງລາວ. ດ້ວຍຄວາມລຳອຽງເຂົ້າຂ້າງອອກຊາ, ນາງໄດ້**<u>ປຸ້ນ</u>**ຄອບຄົວຕົນເອງຈາກຄວາມຈົງຮັກພັກດີທີ່ຜິດບ່ອນ(misplaced loyalty). ຜູ້ຂຽນ ສະຕີເວັນ ລໍສັນ (Steven Lawson) ຂຽນປຶ້ມ "ຄວາມເຊື່ອຢູ່ໃຕ້ໄຟ" (Faith Under Fire) ກ່ຽວກັບບັນດາໂຈນ (ຊາຕານ) ທີ່ເຂົ້າໄປງັດແງະຮ້ານຂາຍເຄື່ອງເອ້ (ຂາຍຄຳ) ໃນຄືນນຶ່ງແຕ່ບໍ່ລັກເອົາຫຍັງເລີຍ. ແທນທີ່, ພວກເຂົາໄດ້ປ່ຽນປ້າຍລາຄາສິນຄ້າທັງໝົດ (ຖືກເປັນແພງ-ແພງເປັນຖືກ). ມື້ເຊົ້າຕໍ່ມາ, ພວກໂຈນໄດ້ຍ່າງເຂົ້າໄປໃນຮ້ານຂາຍຄຳແລະຊື້ຂອງມີຄ່າໃນລາຄາຕ່ຳທີ່ສຸດ. **ພວກເຂົາເປັນອາດຊະຍາກອນ!** ເຊັ່ນດຽວກັນ, ຊາຕານໄດ້ລັກເອົາຄຸນຄ່າລາຄາຂອງພວກເຮົາແລະປ່ຽນປ້າຍລາຄາກ່ຽວກັບຄວາມສັດຊື່ແລະຄວາມຮັກຕໍ່ຄວາມໜ້າຊື່ໃຈຄົດແລະຄວາມເຫັນແກ່ຕົວ. ແລະຊາຕານຂອບໃຈພວກເຮົາສຳລັບທຸຣະກິຈຂອງພວກເຮົາ. ເຣເບກາໄດ້ປ່ຽນປ້າຍລາຄາສິນຄ້າ. ໃນປະຈຸບັນ, ນາງຢູ່ໃນທຸຣະກິຈຫຼອກລວງແລະດຶງຢາໂຄບເຂົ້າໄປໃນແຜນການຂອງນາງ. ນາງໄດ້ກ້າວເຂົ້າໄປໃນຄວາມມືດຂອງການຫຼອກລວງຕົນເອງໂດຍການຮັກລູກຊາຍຄົນນຶ່ງຫຼາຍກວ່າອີກຄົນນຶ່ງ. ສຳລັບເອຊາວ, ການໄດ້ຮັບພອນຈາກພໍ່ແມ່ນຖືວ່າເປັນສ່ວນສຳຄັນໃນການສະແດງຕົວຕົນຂອງລາວໃນຖານະບຸດຫົວປີ. <u>ການສູນເສັຽພອນນີ້ໄປກໍ່ປຽບເໝືອນກັບການຖືກສາບແຊ່ງໃນວັດທະນະທັມສມັຍນັ້ນ.</u> **ນັ້ນຄືສິ່ງທີ່ເຮັດໃຫ້ການຫຼອກລວງຂອງເຣເບກາຮ້າຍກາດ.**

*ເປັນຫຍັງຄວາມສັດຊື່ຈຶ່ງສຳຄັນຫຼາຍໃນສາຍສັມພັນທີ່ດີໃນຄອບຄົວ?*

## 3. <u>ປະຖົມມະການ 27:11-13</u>

*11. ແຕ່ຢາໂຄບເວົ້າຕໍ່ແມ່ວ່າ, "ແມ່ກໍຮູ້ວ່າ ເອຊາວ ເປັນຄົນມີຂົນສ່ວນລູກມີຕົນຕົວກ້ຽງ. 12. ບາງທີພໍ່ເພິ່ນອາດຈະລູບເບິ່ງແລະຮູ້ວ່າລູກກຳລັງຫລອກລວງເພິ່ນ ດັ່ງນັ້ນແທນທີ່ລູກຈະໄດ້ຮັບພອນຈາກເພິ່ນກໍເລີຍຈະໄດ້ຮັບຄວາມປ້ອຍດ່າແທນ." 13. ແມ່ໄດ້ຕອບລາວວ່າ, "ລູກເອີຍຂໍໃຫ້ຄວາມປ້ອຍດ່າຕົກເປັນຂອງແມ່ ຈົ່ງໄປເອົາແບ້ທີ່ແມ່ບອກນັ້ນມາ.*

ບໍ່ວ່າຈະເປັນເຣເບກາ, ຫຼືທ່ານກັບຂ້າພະເຈົ້າ, ການມີລູກຄົນໂປດປານແລະເອົາໃຈລາວໃຫ້ເຮັດບາງສິ່ງບາງຢ່າງທີ່ຜິດພາດໝາຍຄວາມວ່າພວກເຮົາບໍ່ໄດ້ຮັກລູກຄົນນັ້ນເລີຍ! ມັນເຮັດໃຫ້ລາວຕົກເລິກເຂົ້າໄປສູ່ຜົນທີ່ຕາມມາຈາກບາບຫຼາຍຍິ່ງຂຶ້ນ. <u>ບາງທີເຣເບກາອາດຈະໃຊ້ເຫດຜົນຫຼືຈິດວິນຍານໃນການຕັດສິນໃຈຂອງນາງ</u>. ບາງທີນາງໄດ້ໃຫ້ຄວາມປະທັບໃຈທີ່ນາງໄດ້ "**ຊ່ອຍພຣະເຈົ້າ**" ໂດຍເຮັດໃຫ້ຄຳພະຍາກອນຂອງພຣະອົງສຳເລັດກ່ຽວກັບລູກຊາຍແຝດຂອງນາງ. ກ່ອນເກີດລູກແຝດຂອງນາງ, ພຣະຜູ້ເປັນເຈົ້າໄດ້ຊົງກ່າວກັບນາງວ່າ: "ສອງຊົນຊາດຢູ່ໃນທ້ອງຂອງເຈົ້າ…ແລະຜູ້ໃຫຍ່ຈະຮັບໃຊ້ຜູ້ນ້ອຍ" (ປຖກ 25:23). **ແຕ່ມັນບໍ່ເຄີຍຖືກຕ້ອງທີ່ຈະເຮັດຜິດ.** ແລະເຖິງແມ່ນວ່າເຣເບກາເຕັມໃຈທີ່ຈະຮັບຜິດຊອບ, ແຕ່ນາງບໍ່ສາມາດປົກປ້ອງຢາໂຄບຈາກຜົນສະທ້ອນຂອງລາວ. ຢາໂຄບກໍ່ມີຄວາມຜິດເໝືອນກັນ. <u>ລາວບໍ່ໄດ້ປະຕິເສດແຜນການຫຼອກລວງຂອງແມ່ຂອງລາວ</u>. ຄວາມກັງວົນດຽວຂອງລາວແມ່ນວິທີການກຳຈັດອຸປະສັກທີ່ອາດຈະເຮັດໃຫ້ລາວບໍ່ສຳເລັດການສໍ້ໂກງ. ລາວກັງວົນແຕ່ພຽງວ່າແຂນຂອງລາວບໍ່ມີຂົນພຽງພໍ (ໜ້ອຍເກີນໄປ)!

ຈົ່ງພິຈາລະນາເຖິງຜົນກະທົບທີ່ເກີດຈາກການເປັນພໍ່ແມ່ທີ່ມີຄວາມລຳອຽງ (ເຂົ້າຂ້າງອອກຊາ) ຂອງອີຊາກແລະເຣເບກາ. ສາມີແລະພັລຍາບໍ່ສາມາດໄວ້ວາງໃຈກັນຕລອດຊີວິດ. ພີ່ນ້ອງຝາແຝດກາຍເປັນສັດຕູກັນ. ອີຊາກແລະເຣເບກາສູນເສັຽລູກຊາຍໄປທັງສອງຄົນເລີຍ. ຄວາມລຳອຽງໄດ້ທຳລາຍຄອບຄົວທັງໝົດຂອງນາງ. ມານຊາຕານໃຊ້ຄຳຕົວະແລະການຫຼອກລວງເພື່ອຊຸກຍູ້ໃຫ້ພວກເຮົາ

ເຮັດບາບເນື່ອງຈາກວ່າບັນດາພວກຜູດພີປີສາດຕ້ອງການທຳຮ້າຍພວກເຮົາໃຫ້ຫຼາຍທີ່ສຸດ. **ພຣະເຈົ້າຊົງເປັນຄວາມຮັກແລະພຣະອົງມີພຣະປະສົງໃຫ້ພວກເຮົາດຳເນີນຊີວິດຢູ່ໃນຄວາມຈິງແຫ່ງຄວາມສັດຊື່, ເພາະວ່າຄວາມຈິງເຮັດໃຫ້ພວກເຮົາເປັນອິດສລະ.**

*ແມ່ນຫຍັງທີ່ເຮັດໃຫ້ມັນຍາກທີ່ຈະເອົາຊນະຕໍ່ການຕົວະແລະການຫຼອກລວງ?*

## ນຳໃຊ້ໃນຊີວິດ:

ພວກເຮົາທຸກຄົນມີຄວາມມັກຂອງໃຜຂອງລາວ, ແຕ່ວ່າໃນເວລາທີ່ເວົ້າກ່ຽວກັບຄອບຄົວ, ການໃຊ້ຄວາມຮັກຫຼັງຊັງບໍ່ງສາມາດມີຜົນສະທ້ອນຮ້າຍແຮງ. ທ່ານສາມາດປະຕິບັດການຢ່າງໃດເພື່ອຕອບສນອງຕໍ່ການສຶກສາໃນມື້ນີ້? ຈົ່ງເລືອກນຶ່ງໃນການນຳໃຊ້ຕໍ່ໄປນີ້:

- **ຈົ່ງອ່ານ.** ໃນອາທິດນີ້, ຈົ່ງອ່ານ 1 ໂກຣິນໂທ ບົດທີ່ 13. ພຣະຄັມພີບົດນີ້ສນອງແບບຢ່າງສຳລັບຄວາມຮັກແລະຄວາມເຄົາຣົບລະຫວ່າງບັນດາຄອບຄົວ.

- **ຈົ່ງສະທ້ອນຄືນຫຼັງ.** ຈົ່ງບັນທຶກແລະທົບທວນຄືນຫຼັງເວລາທີ່ທ່ານຮູ້ສຶກເຈັບປວດໃນເວລາທີ່ຄົນອື່ນເບິ່ງຄືວ່າມີຄຸນຄ່າແລະເໝາະສົມກວ່າທ່ານ. ທ່ານໄດ້ເອົາຊນະຄວາມຮູ້ສຶກເຫຼົ່ານັ້ນໄດ້ແນວໃດ? ທ່ານໄດ້ຕອບໂຕ້ແນວໃດ?

- **ຈົ່ງຝຶກຝົນ.** ຈົ່ງສແວງຫາວິທີການແກ້ໄຂການຮັກຫຼົງຊັງບໍ່ງງໃນຊີວິດຂອງທ່ານເອງ (ຢາກບ 2:1,3,9). ຖ້າທ່ານຄິດວ່າທ່ານອາດມີຄວາມຜິດໃນການສະແດງຄວາມຮັກຫຼັງຊັງບໍ່ງງໃນຄອບຄົວຂອງທ່ານ, ຈົ່ງຕັ້ງເວລາເພື່ອໃຫ້ມີການສົນທະນາກັບສະມາຊິກໃນຄອບຄົວ ທີ່ທ່ານອາດໄດ້ເຮັດໃຫ້ເກີດຄວາມເສັຽຫາຍໂດຍການຮັກຫຼັງຊັງບໍ່ງງນັ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**